ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 45 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 05 ພະຈິກ 2018

ສຳນັກງານ ຄຄຊ
115.9
ວັນທີ 08.NOV.2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 15-19/10/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. <u>ວຽກງານການເມືອງແນວຄິດ</u>**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. <u>ການເຄື່ອນໄຫວວຽກງານວິຊາສະເພາະ</u>**

**1. <u>ສະພາບເສດຖະກິດເງິນຕາສາກົນ</u>**

**1.1 <u>ອັດຕາແລກປ່ຽນສາກົນ</u>**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,07% ທຽບໃສ່ເອີໂຣ ເນື່ອງຈາກທະນາຄານກາງແຫ່ງ ສະຫະລັດອາເມລິກາ(ເຟດ) ອາດຈະສືບຕໍ່ປັບຂຶ້ນອັດຕາດອກເບ້ຍອີກຄັ້ງໜຶ່ງ. ພ້ອມກັນນັ້ນ,ຕົວເລກດັດຊະນີຊີ້ນຳເສດຖະກິດ ເພີ່ມຂຶ້ນມາຢູ່ໃນລະດັບ 0,5% ໃນເດືອນ 9/2018 ຈາກເພີ່ມຂຶ້ນ 0,4% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>08-12/10/2018 | ອາທິດນີ້<br>15-19/10/2018 | ເປີເຊັນ ແຂງຄ່າ(+) /<br>ອ່ອນຄ່າ(–) |
|---|---:|---:|---:|
| ໂດລາ/ເອີໂຣ | 1,1580 | 1,1457 | 1,07% |
| ເຢນ/ໂດລາ | 112,30 | 112,36 | -0,05% |
| ບາດ/ໂດລາ | 32,750 | 32,610 | 0,43% |
| ເປໂຊ/ໂດລາ | 54,09 | 53,70 | 0,72% |
| ຣູເປັຍ/ໂດລາ | 15.200,00 | 15.185,00 | 0,10% |
| ໂດລາສິງກະໂປ/ໂດລາ | 1,3773 | 1,3788 | -0,11% |
| ຢວນ/ໂດລາ | 6,9243 | 6,9312 | -0,10% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 3,78% ເປັນ 68,95 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນມາຢູ່ 6,49 ລ້ານບາເຣວ ໃນອາທິດທີ 12/10/2018 ຈາກທີ່ເພີ່ມຂຶ້ນຮອດລະດັບ 5,99 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ເພີ່ມຂຶ້ນ 0,67% ເປັນ 1.228,46 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,09% ແຕ່ອ່ອນຄ່າລົງ 0,77% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,59% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,88% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 12/10/2018 | | | ອາທິດນີ້ 19/10/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8,615,93 | 8.643,94 | 8.630,16 | 8,610,20 | 8.634,82 | 8.622,29 | 0,07% | 0,11% | 0,09% | -3,58% | -3,57% | -3,59% |
| ບາດ | 265,60 | 268,61 | 267,20 | 268,51 | 269,85 | 269,28 | -1,08% | -0,46% | -0,77% | -5,02% | -4,85% | -4,88% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 1,3% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 12,57%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,51%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (12-18/10/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 4,74 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 30,57 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 35,31 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 261,77 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 204,11 ລ້ານບາດ ແລະ ຂາຍເງິນບາດໄດ້ 465,88 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ເພີ່ມຂຶ້ນ 60,37% ແຕ່ເງິນບາດ ຫຼຸດລົງ 2,98%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 5,16 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 59,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,57 ລ້ານໂດລາ ແລະ ເງິນບາດ ຈຳນວນ 75,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: *ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.*

---
1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 08-12/10/2018 | | ອາທິດນີ້ 15-19/10/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **16.55** | **215.78** | **30.57** | **204.11** | **84.71%** | **-5.41%** |
| - ທ/ຄທຸລະກິດລັດ | 5.05 | 147.56 | 11.29 | 110.74 | 123.56% | -24.95% |
| - ທ/ຄທຸລະກິດອື່ນໆ | 11.50 | 68.22 | 19.28 | 93.37 | 67.65% | 36.87% |
| 2. ການຂາຍເງິນຕາຕ່າງປະເທດ | **24.53** | **474.81** | **35.31** | **465.88** | **43.95%** | **-1.88%** |
| - ທ/ຄທຸລະກິດລັດ | 9.57 | 244.17 | 13.77 | 133.94 | 43.89% | -45.14% |
| - ທ/ຄທຸລະກິດອື່ນໆ | 14.96 | 230.64 | 21.54 | 331.94 | 43.98% | 43.92% |
| ຊື້-ຂາຍສຸດທິ ທທກ | **-7.98** | **-259.03** | **-4.74** | **-261.77** | **-40.60%** | **1.06%** |
| - ຜິດດ່ຽງຊື້-ຂາຍ | -48.22% | -120.04% | -15.51% | -128.25% | -67.84% | 6.84% |
| **- ມູນຄ່າການຊື້-ຂາຍ** | **41.08** | **690.59** | **65.88** | **669.99** | **60.37%** | **-2.98%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-6.50** | **-40.00** | **-5.16** | **-59.00** | | |
| - ທຫລ ຊື້ຈາກ ທທກ | 0.00 | 0.00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 6.50 | 40.00 | 5.16 | 59.00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **2.80** | **109.50** | **0.57** | **75.00** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 10/2018 ຄາດວ່າຈະຢູ່ໃນລະດັບ 3,18%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈໍາອາທິດວັນທີ (12-18/10/2018) ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈໍານວນ 23,69 ລ້ານໂດລາສະຫະລັດ. ໃນນັ້ນ, ໃນສ່ວນຂອງກະແສເງິນໄຫຼເຂົ້າ ແມ່ນມີຈໍານວນ 181,21 ລ້ານໂດລາສະຫະລັດ (ຊຶ່ງລາຍຮັບສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈໍານວນ 70,38 ລ້ານໂດລາສະຫະລັດ, ຮັບຈາກເງິນລົງທຶນໂດຍກົງຈາກຕ່າງປະເທດ ຈໍານວນ 53,83 ລ້ານໂດລາສະຫະລັດ ແລະ ຮັບຄ່າບໍລິການຈໍານວນ 37,54 ລ້ານໂດລາສະຫະລັດ). ໃນສ່ວນຂອງກະແສເງິນໄຫຼອອກ ມີຈໍານວນ 157,53 ລ້ານໂດລາສະຫະລັດ (ຊຶ່ງລາຍຈ່າຍສ່ວນໃຫຍ່ແມ່ນຊໍາລະຄ່ານໍາເຂົ້າສິນຄ້າ ຈໍານວນ 100,43 ລ້ານໂດລາສະຫະລັດ, ຊໍາລະເງິນກູ້ພາກລັດຖະບານ ຈໍານວນ 27 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈໍານວນ 10,09 ລ້ານໂດລາສະຫະລັດ).

## 3. ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ຈໍານວນ 844 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 306 ສະບັບ ເທົ່າກັບ 56,87% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 347,03 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 67,66 ຕື້ກີບ ເທົ່າກັບ 16,31%.

- ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (12-18/10/2018) ມີທັງໝົດ 3.861 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 3.793 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈໍານວນ 88 ຕື້ກີບ ຈາກ 1.012,82 ຕື້ກີບ ມາເປັນ 925,29 ຕື້ກີບ ເທົ່າກັບ 8,64%;

- **ກະຊວງການເງິນ**: ມີການເຄື່ອນໄຫວຈຳນວນ 68 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນ 96,47 ຕື້ກີບ ຈາກ 118,67 ຕື້ກີບ ມາເປັນ 22,20 ຕື້ກີບ ເທົ່າກັບ 81,29%.

**4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 839,72 ຈຸດ ຫຼຸດລົງ ຈາກ 847,35 ຈຸດ ຫຼື ເທົ່າກັບ 0,90% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 417.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,62 ຕື້ກີບ ຫຼຸດລົງ 3,87% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 80,11% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ BCEL ແລະ LAT.

➢ **<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 147.200 | 824.915.000 | 5.600 | **97.700** | **547.195.000** | **5.600** | -33,63 | -33,67 | - |
| **EDL-GEN** | 196.600 | 818.865.000 | 4.150 | **136.500** | **550.055.000** | **4.100** | -30,57 | -32,83 | -1,20 |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | 2.200 | 3.090.000 | 1.400 | **600** | **840.000** | **1.400** | -72,73 | -72,82 | - |
| **SVN** | - | - | 1.500 | - | - | **1.500** | - | - | - |
| **PCD** | 200 | 240.000 | 1.200 | **100** | **120.000** | **1.200** | -50,00 | -50,00 | - |
| **LCC** | - | - | 1.900 | - | - | **1.900** | - | - | - |
| **MHTL** | 15.500 | 44.150.000 | 2.850 | **182.500** | **528.875.000** | **2.950** | 1.077,42 | 1.097,90 | 3,51 |
| **LAT** | 1.700 | 1.530.000 | 850 | **300** | **245.000** | **750** | -82,35 | -83,99 | -11,76 |
| ທັງໝົດ | **363.400** | **1.692.790.000** | | **417.700** | **1.627.330.000** | | **14,94** | **-3,87** | |

**5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>**

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ**: ❶ ກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ຕຸລາ ປີ 2018 ທີ່ ຫສນຍ, ❷ ກອງປະຊຸມປຶກສາຫາລືຮ່າງຂໍ້ຕົກລົງວ່າດ້ວຍການກູ້ຢືມຈາກຕ່າງປະເທດຂອງທະນາຄານ, ❸ ກອງປະຊຸມປຶກສາຫາລືກ່ຽວກັບການກຳນົດທິດທາງໃນການສ້າງນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບການຊຳລະ, ❹ ເຂົ້າຮ່ວມກອງປະຊຸມຄົບຄະນະຂອງກາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ປະຈຳປີ 2018, ❺ ກອງປະຊຸມຄະນະກະກຽມກອງປະຊຸມ 2 ຝ່າຍ ກັບທະນາຄານແຫ່ງປະເທດໄທ, ❻ ເຂົ້າຮ່ວມງານຖະແຫຼງຂ່າວຢ່າງເປັນທາງການກ່ຽວກັບການກະກຽມສະເຫຼີມສະຫຼອງວັນສ້າງຕັ້ງເມືອງວຽງໄຊ-ຖານທີ່ໝັ້ນຂອງການປະຕິວັດລາວ ຄົບຮອບ 50

ປີ ທີ່ ຫໍປະຊຸມແຫ່ງຊາດ, ❼ ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ແລະ ❽ ເຂົ້າຮ່ວມພິທີເປີດທະນາຄານຫວຽດຄອມ;

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນຳສະເໜີແຜນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈຳປີ 2019 ທີ່ໄດ້ກຳນົດໄວ້;
- ສືບຕໍ່ຕິດຕາມການທົດລອງ ລະບົບອັດຕາດອກເບ້ຍສະເລ່ຍຖ່ວງນ້ຳໜັກ ແລະ ຕິດຕັ້ງໂປຣແກຣມດຳເນີນທຸລະກຳຕະຫຼາດລະຫວ່າງທະນາຄານ ໄລຍະ 02 ພ້ອມທັງກະກຽມແຜນຈັດກອງປະຊຸມເຜີຍແຜ່ວຽກງານ CIB ໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ.
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມຄົບຄະນະຂອງຄະນະບໍລິຫານສູນກາງພັກ ຄັ້ງທີ 7 ສະໄໝທີ X , ❷ ກອງປະຊຸມປຶກສາຫາລືກ່ຽວກັບການລະດົມທຶນເພື່ອດຸ່ນດ່ຽງງົບປະມານ ແລະ ປະກອບເພີ່ມໃຫ້ຄັງສຳຮອງເງິນຕາຕ່າງປະເທດ, ❸ ກອງປະຊຸມປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ, ❹ ເຂົ້າຮ່ວມກອງປະຊຸມລະດັບສູງກ່ຽວກັບການສະເຫຼີມສະຫຼອງ ການເປີດປະເທດ ແລະ ປະຕິຮູບລະບອບເສດຖະກິດຂອງ ສປ ຈີນ ຄົບຮອບ 40 ປີ ຢູ່ ສປ ຈີນ.

ຣ. ຫົວໜ້າຫ້ອງການ

ສຸກັນ ຈັນທະວົງ